

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I.** ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ...................................01 - 06

**II** ການເຄື່ອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ.........................................07 - 12


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ເດືອນ ມີນາ 2025


ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ

**Tel : 030 9876030, Email: Ri.dept.la@Gmail.com, Website: www.cerccp.org.la**

## I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

### 1. ສະພາບການພົ້ນເດັ່ນພາຍໃນ ສປປ ລາວ.

#### 1) ກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX.

ກອງປະຊຸມສະໄໝວິສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ປິດລົງ ດ້ວຍຜົນສຳເລັດອັນຈົບງາມ ພາຍຫຼັງ ດຳເນີນມາແຕ່ວັນທີ 17-20 ມີນາ 2025 ໂດຍການເປັນປະທານ ຂອງ ສະຫາຍ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ, ໂດຍມີ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປ ລາວ, ສະຫາຍ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ບັນດາການນຳ ພັກ-ລັດ, ອະດີດການນຳ ພັກ-ລັດ, ພ້ອມດ້ວຍ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຕ່າງໆ ເຂົ້າຮ່ວມ.

ກອງປະຊຸມ ໄດ້ພິຈາລະນາ, ຮັບຮອງເອົາເນື້ອໃນສຳຄັນຈຳນວນໜຶ່ງ ເປັນຕົ້ນ ໄດ້ພິຈາລະນາ ແລະ ຮັບຮອງເອົາ ລັດຖະທຳມະນູນ ສະບັບປັບປຸງປີ 2025 ຫຼັງຈາກນັ້ນ, ສະຫາຍ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ອອກລັດຖະດຳລັດ ສະບັບເລກທີ 037/ປປທ, ລົງວັນທີ 22 ມີນາ 2025 ກ່ຽວກັບ ການປະກາດໃຊ້ລັດຖະທຳມະນູນຢ່າງເປັນທາງການ ເປັນການສືບຕໍ່ຜັນຂະຫຍາຍ ແນວທາງປ່ຽນແປງໃໝ່ຂອງພັກ ທີ່ວາງອອກໃນແຕ່ລະໄລຍະ ໃຫ້ເປັນອັນລະອຽດ ເຂົ້າໃສ່ເນື້ອໃນຂອງ ລັດຖະທຳມະນູນ ເຊິ່ງເປັນກົດໝາຍພື້ນຖານສຳຄັນຂອງຊາດ, ເປັນເຄື່ອງມືສຳຄັນຂອງລັດ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງພັກກຳອຳນາດ, ການຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມດ້ວຍກົດໝາຍ. ການປັບປຸງລັດຖະທຳມະນູນ ຄັ້ງນີ້, ແນໃສ່ການປັບປຸງລະບົບອຳນາດແຫ່ງລັດ ປະຊາທິປະໄຕປະຊາຊົນ ໃຫ້ມີປະສິດທິພາບ, ປະສິດທິຜົນສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສາມາດເຊື່ອມໂຍງເສດຖະກິດພາກພື້ນ ແລະ ສາກົນ ແນໃສ່ສ້າງພື້ນຖານທາງດ້ານກົດໝາຍ ກໍຄື ນິຕິກຳທີ່ວາງອອກໃນຕໍ່ໜ້າ ໃຫ້ຮັບປະກັນຄວາມສອດຄ່ອງກັບແນວທາງການເມືອງຂອງພັກ, ທັງຈະເປັນການຊ່ວຍໃຫ້ການຄຸ້ມຄອງ-ບໍລິຫານລັດດ້ວຍກົດໝາຍໃນໄລຍະໃໝ່ ໃຫ້ມີຄຸນນະພາບສູງຂຶ້ນເລື້ອຍໆ. ພ້ອມນີ້, ຍັງໄດ້ຮັບຮອງເອົາການປັບປຸງກົດໝາຍ ຈຳນວນ 02 ສະບັບຄື: ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ແລະ ກົດໝາຍ ວ່າດ້ວຍ ພະນັກງານ-ລັດຖະກອນ ເພື່ອໃຫ້ສອດຄ່ອງກັບມະຕິຂອງພັກ, ການປັບປຸງກົງຈັກການຈັດຕັ້ງ ແລະ ສອດຄ່ອງກັບ ລັດຖະທຳມະນູນ ສະບັບປັບປຸງ ປີ 2025 ທັງເປັນການປະກອບສ່ວນສຳຄັນ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນຍິ່ງໆຂຶ້ນ ແລະ ຮັບຮອງເອົານະໂຍບາຍສິ່ງເສີມພິເສດ ສະເພາະໃຫ້ຜູ້ລົງທຶນ ໃນນິຄົມອຸດສາຫະກຳ ອະມະຕະ ຕາມການສະເໜີຂອງລັດຖະບານ ກ່ຽວກັບ ການຍົກເວັ້ນອາກອນກຳໄລ ໄລຍະ 30 ປີ (ສະເພາະຜູ້ທີ່ມາລົງທຶນພາຍໃນ 07 ປີທຳອິດ ຂອງການດຳເນີນນິຄົມດັ່ງກ່າວ) ທີ່ຈະລົງທຶນໃນ 04 ກິດຈະກຳສິ່ງເສີມພິເສດ ຄື: ອຸດສາຫະກຳຜະລິດ, ປະກອບເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການກະເສດ, ອຸດສາຫະກຳຝຸ່ນຊີວະພາບ, ເຄມີ ແລະ ການຜະລິດອາຫານສັດ, ອຸດສາຫະກຳຜະລິດແຜງຊິ້ນສ່ວນພະລັງງານແສງອາທິດ ແລະ ພະລັງງານທົດແທນ, ອຸດສາຫະກຳຜະລິດລົດ ແລະ ອາໄຫລ່, ອຸດສາຫະກຳຜະລິດ ອຸປະກອນໄຟຟ້າ ແລະ ເອເລັກໂຕຣນິກ.

#### 2) ກອງປະຊຸມສະໄໝສາມັນຂອງ ລັດຖະບານປະຈຳ ເດືອນມີນາ 2025.

ກອງປະຊຸມສະໄໝສາມັນຂອງ ລັດຖະບານປະຈຳ ເດືອນມີນາ 2025 ໄຂຂຶ້ນໃນວັນທີ 24 ມີນາ 2025 ທີ່ ສຳນັກງານນາຍົກລັດຖະມົນຕີ. ກອງປະຊຸມດຳເນີນເປັນເວລາ 02 ວັນ ພາຍໃຕ້ການເປັນປະທານຂອງ ສະຫາຍ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ຜູ້ຕາງໜ້າກະຊວງ-ອົງການ ເຂົ້າຮ່ວມແບບເຊິ່ງໜ້າ; ການນຳຂອງບັນດາແຂວງ ແລະ ນະຄອນຫລວງວຽງຈັນ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກ ເພື່ອຮັບຟັງ ແລະ ປະກອບຄຳເຫັນຕໍ່ການລາຍງານສະພາບພົ້ນເດັ່ນ ປະຈຳເດືອນມີນາ ແລະ ທິດທາງແຜນວຽກຈຸດສຸມປະຈຳເດືອນເມສາ 2025.

ກອງປະຊຸມຄັ້ງນີ້, ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື ປະກອບຄໍາເຫັນ ແລະ ພິຈາລະນາ ຕໍ່ບັນດາຫົວຂໍ້ທີ່ສໍາຄັນ ເປັນຕົ້ນ ສະພາບພົ້ນເດັ່ນ ແລະ ວຽກງານຈຸດສຸມຮີບດ່ວນ ຄື: ວຽກງານພົ້ນເດັ່ນ ປະຈໍາເດືອນມີນາ ແລະ ທິດທາງແຜນການ ປະຈໍາເດືອນເມສາ 2025 ຂອງລັດຖະບານ ຕິດພັນກັບການແກ້ໄຂບັນຫາເຄັ່ງຮ້ອນ ທາງດ້ານເສດຖະກິດ, ເງິນຕາ, ອັດຕາແລກປ່ຽນ, ລາຄາສິນຄ້າ, ການແກ້ໄຂບັນຫາໜີ້ສິນ ແລະ ການຜະລິດສິນຄ້າ; ຕີລາຄາການຈັດຕັ້ງປະຕິບັດ ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 153/ສພຊ, ລົງວັນທີ 12 ທັນວາ 2024 ວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2024 ແລະ ທິດທາງແຜນການລົງທຶນຂອງລັດ ປີ 2025 ແລະ ມະຕິສະບັບເລກທີ 154/ສພຊ, ລົງວັນທີ 12 ທັນວາ 2024 ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາປີ 2024 ແລະ ທິດທາງແຜນການ ປີ 2025 ແລະ ດໍາລັດ ສະບັບເລກທີ 702/ນຍ, ລົງວັນທີ 25 ທັນວາ 2024 ວ່າດ້ວຍ ການກໍານົດໜ້າວຽກ ແລະ ການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈໍາປີ 2025 ແລະ ແຜນການແກ້ໄຂຜົນການກວດກາ-ກວດສອບ ປະຈໍາໄຕມາດ 01 ປີ 2025 ແລະ ຕີລາຄາປະຈໍາໄຕມາດ 01 ປີ 2025 ກ່ຽວກັບບັນຫາທີ່ຕິດພັນຂົງເຂດວຽກງານປ້ອງກັນຄວາມສະຫງົບ.

ຮ່າງຍຸດທະສາດພັດທະນາໂທລະຄົມມະນາຄົມ ແລະ ອິນເຕີເນັດແຫ່ງຊາດ 2026-2040; ຮ່າງ ຍຸດທະສາດ ແລະ ແຜນດໍາເນີນງານແຫ່ງຊາດ ດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ 2026-2040; ຮ່າງກົດໝາຍວ່າດ້ວຍອາກອນລາຍໄດ້ (ສະບັບປັບປຸງ); ຮ່າງກົດໝາຍ ວ່າດ້ວຍ ປ້າຍ; ຮ່າງກົດໝາຍ ວ່າດ້ວຍ ຢາ ແລະ ຜະລິດຕະພັນການແພດ; ຮ່າງກົດໝາຍ ວ່າດ້ວຍ ຊົນລະປະທານ (ສະບັບປັບປຸງ) ແລະ ຮ່າງກົດໝາຍ ວ່າດ້ວຍ ສາມັນສຶກສາ.

**2. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ.**

ວັນທີ 11 ມີນາ 2025, ຄະນະປະຈໍາສະພາແຫ່ງຊາດຫວຽດນາມ ໄດ້ຈັດກອງປະຊຸມປະກອບຄໍາເຫັນ ຕໍ່ບົດສະຫຼຸບກອງປະຊຸມວິສາມັນ ຄັ້ງທີ 9 ຂອງສະພາແຫ່ງຊາດຊຸດທີ XV (12-19/2/2025). ໃນກອງປະຊຸມ, ສະຫາຍເຈິ່ນ ແທັງເໝິນ, ປະທານສະພາແຫ່ງຊາດ ໄດ້ຊີ້ແຈ້ງ: ກົດໝາຍ 4 ສະບັບ ແລະ ມະຕິ 5 ສະບັບ ກ່ຽວກັບການສັບຊ້ອນ, ຈັດວາງກົງຈັກລັດ ໂດຍສະພາແຫ່ງຊາດ ໄດ້ຮັບຮອງເອົາ ເພື່ອແນໃສ່ຍົກສູງຄຸນນະພາບ, ປະສິດທິຜົນການຄຸ້ມຄອງລັດ, ບັນດາມະຕິກໍານົດກ່ຽວກັບກົນໄກ, ນະໂຍບາຍພິເສດ, ເປັນເອກະລັກສະເພາະ, ບັນດາເນື້ອໃນສໍາຄັນ, ຮີບດ່ວນ, ຈໍາເປັນອື່ນໆ ກໍໄດ້ຮັບການຮັບຮອງເອົາ ເພື່ອປະກອບສ່ວນຊຸກຍູ້ ແລະ ບັນລຸເປົ້າໝາຍການເຕີບໂຕ GDP ແຕ່ 8% ຂຶ້ນໄປໃນປີ 2025 ແລະ ການເຕີບໂຕ 2 ຕົວເລກໃນໄລຍະ 2026-2030. ສະຫາຍ ໄດ້ເນັ້ນໜັກວ່າ: ໃນສະພາບການສັບສົນ ຕ້ອງມີການປັບປຸງກົງຈັກ ໂດຍໂຮມຕາແສງເຂົ້າກັນໃຫ້ຍັງເຫຼືອ 60-70% ຕາແສງ ໃນຈໍານວນທັງໝົດ 10,000 ຕາແສງ.

**2) ພັກກອມມູນິດຈີນ.**

ວັນທີ 05 ມີນາ 2025, ສະພາແຫ່ງຊາດຈີນ ໄດ້ຈັດກອງປະຊຸມປະຈໍາປີ ຄັ້ງທີ 3 ຂອງສະພາປະຊາຊົນແຫ່ງຊາດຈີນ ສະໄໝທີ 14 (The 14th National People's Congress (NPC), third session) ມີຜູ້ແທນເຂົ້າຮ່ວມ 3.000 ຄົນ. ກອງປະຊຸມ ໄດ້ຮັບຟັງ ບົດລາຍງານວຽກງານຂອງລັດຖະບານ, ທົບທວນຄືນວຽກງານປີ 2024, ແຜນການພັດທະນາເສດຖະກິດ-ສັງຄົມ ປີ 2025, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ທັງພາຍໃນ ແລະ ພາຍນອກ. ໃນປີ 2025 ແມ່ນປີສຸດທ້າຍຂອງການປະຕິບັດແຜນການ 5 ປີ ຄັ້ງທີ 14 (2021-2025), ຈີນ ໄດ້ວາງເປົ້າໝາຍການເຕີບໂຕດ້ານເສດຖະກິດໃຫ້ໄດ້ 5% ໃນປີ 2025. ຕັ້ງເປົ້າໝາຍ ອັດຕາຄົນຫວ່າງງານ ໃຫ້ຢູ່ທີ່ 5,5% ແລະ ມີແຜນຈະສ້າງ

ວຽກເຮັດງານທຳໃໝ່ໃຫ້ຫຼາຍກວ່າ 12 ລ້ານຄົນ ໃນປີ 2025 ແລະ ຄາດຄະເນການເພີ່ມຂຶ້ນຂອງດັດຊະນີລາຄາບໍລິໂພກ (CPI) ປະມານ 2%, ຮັບຮອງເອົາອັດຕາການຂາດດຸນຕໍ່ GDP ຢູ່ທີ່ 4% ໃນປີ 2025, ເພີ່ມຂຶ້ນ 1% ຂອງປີ 2024, ອອກພັນທະບັດພິເສດຂອງລັດຖະບານທ້ອງຖິ່ນໃນປີ 2025 ໄດ້ 4,4 ພັນຕື້ຢວນ, ເພີ່ມຂຶ້ນ 500 ຕື້ຢວນທຽບໃສ່ປີ 2024, ອອກພັນທະບັດຄັງເງິນພິເສດທີ່ມີມູນຄ່າສູງສຸດໃນປີ 2025 ຈຳນວນ 1,3 ພັນຕື້ຢວນ, ເພີ່ມຂຶ້ນ 300 ຕື້ຢວນທຽບໃສ່ ປີ 2024, ຈີນຈະສຸມໃສ່ບຸລິມະສິດ ແລະ ການເຊື່ອມໂຍງທີ່ສຳຄັນ, ຊຸກຍູ້ການບໍລິໂພກຢ່າງແຂງແຮງ, ເລັ່ງລັດການພັດທະນາລະບົບອຸດສາຫະກຳທີ່ທັນສະໄໝ, ເລັ່ງລັດການປະຕິບັດມາດຕະການປະຕິຮູບທີ່ສຳຄັນ, ຊຸກຍູ້ການລົງທຶນຈາກຕ່າງປະເທດ ແລະ ເປີດກວ້າງການຄ້າກັບຕ່າງປະເທດຢ່າງມີສະຖຽນລະພາບ. ນອກນີ້, ຍັງໄດ້ກວດກາຄືນບົດລາຍງານຂອງສະພາແຫ່ງລັດ ກ່ຽວກັບ ການຈັດຕັ້ງປະຕິບັດງົບປະມານສູນກາງ ແລະ ທ້ອງຖິ່ນປີ 2024 ແລະ ຮ່າງງົບປະມານສູນກາງ ແລະ ທ້ອງຖິ່ນປີ 2025. ພ້ອມນີ້, ຍັງໄດ້ພິຈາລະນາ ແລະ ຮັບຮອງເອົາກົດໝາຍວ່າ ດ້ວຍສະພາຜູ້ແທນປະຊາຊົນແຫ່ງຊາດ ແລະ ສະພາປະຊາຊົນທ້ອງຖິ່ນສະບັບປັບປຸງ.

**3) ພັກກອມມູນິດກູບາ**

ໃນວັນທີ 22 ມີນາ 2025, ທີ່ ນະຄອນຫຼວງລາຮາວານ, ການນຳພັກ-ລັດຂັ້ນສູງກູບາ ແລະ ສະຖານທູດລາວ ປະຈຳ ສ.ກູບາ ໄດ້ຮ່ວມກັນຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 70 ປີ, ໂດຍການເປັນກຽດເຂົ້າຮ່ວມ ຂອງ ສະຫາຍ ມີເກນ ເດສ໌-ກາແນນ ແບຣມູ (Miguel Díaz-Canel Bermúdez), ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ. ກູບາ; ສະຫາຍ ເອັສເຕບານ ລາໂຊ ເຮີນານເດສ (Esteban Lazo Hernández), ກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດກູບາ; ສະຫາຍ ໂຣເບີດໂຕຣ ໂມຣາເລັດສ ໂອເຣດາ (Roberto Morales Ojeda), ກຳມະການກົມການເມືອງສູນກາງພັກ, ເລຂາທິການອົງການຈັດຕັ້ງຂອງສູນກາງພັກ ພ້ອມດ້ວຍບັນດາສະມາຊິກຂອງກົມການເມືອງອື່ນໆ; ບັນດາລັດຖະມົນຕີ; ອົງການຈັດຕັ້ງມະຫາຊົນ, ບັນດາພະນັກງານສະຖານທູດລາວ ປະຈຳ ສ.ກູບາ, ນັກສຶກສາລາວ ແລະ ເອກອັກຄະລັດຖະທູດຈາກບັນດາປະເທດອ້າຍນ້ອງ. ການສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວຄົບຮອບ 70 ປີ ຄັ້ງນີ້ ມີຄວາມໝາຍຄວາມສຳຄັນທາງປະຫວັດສາດຂອງລາວ, ການພົວພັນລະຫວ່າງ ພັກກອມມູນິດກູບາ ແລະ ພັກປະຊາຊົນປະຕິວັດລາວ ມີມູນເຊື້ອຈາກຜູ້ນຳປະຫວັດສາດ ກໍຄື ສະຫາຍ ຟີແດນ ກາດສ ໂຕຣ ຣຸດສ (Fidel Castro Ruz) ແລະ ສະຫາຍ ໄກສອນ ພົມວິຫານ ໄດ້ຖືກຍົກໃຫ້ເຫັນໃນເຫດການລະນຶກວັນຄົບຮອບ 70 ປີແຫ່ງວັນສ້າງຕັ້ງຜູ້ປົກປັກຮັກສາປະຊາຊົນລາວ.

## 3. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ວັນທີ 06 ມີນາ 2025, ທ່ານ ມິນ ອອງລາຍ, ຜູ້ນຳລັດຖະບານທະຫານມຽນມາ ໄດ້ຢ້ຽມຢາມ ຣັດເຊຍ ຢ່າງເປັນທາງການ ໂດຍໄດ້ຮັບການຕ້ອນຮັບ ຈາກ ທ່ານ ປູຕິນ (Putin), ປະທານາທິບໍດີ ຣັດເຊຍ; ເປັນຄັ້ງທີ 04 ຂອງທ່ານ ມິນອອງລາຍ ທີ່ຢ້ຽມຢາມ ຣັດເຊຍ ເພື່ອຊຸກຍູ້ການຮ່ວມມືສອງຝ່າຍໃຫ້ແໜ້ນແຟ້ນກວ່າເກົ່າ; ສອງຝ່າຍເຫັນດີຈະເພີ່ມທະວີການຮ່ວມມື ດ້ານເສດຖະກິດ ແລະ ດ້ານພະລັງງານນິວເຄຼຍ, ຊຶ່ງສອງຝ່າຍໄດ້ລົງນາມຂໍ້ຕົກລົງ ສ້າງໂຮງງານໄຟຟ້ານິວເຄຼຍ ຂະໜາດນ້ອຍໃນມຽນມາ ເພື່ອເປັນພະລັງງານທີ່ມີລາຄາຖືກກວ່າ ແລະ ເປັນມິດຕໍ່ສິ່ງແວດລ້ອມ; ພ້ອມນີ້, ທ່ານ ປູຕິນ ຍັງໄດ້ເຊີນ ທ່ານ ມິນ ອອງລາຍ ເຂົ້າຮ່ວມວັນແຫ່ງໄຊຊະນະ ຢູ່ຣັດເຊຍ ໃນວັນທີ 09 ພຶດສະພາ 2025.

ສະພາບແຫຼມເກົາຫຼີ ຍັງສືບຕໍ່ເຄັ່ງ ພາຍຫຼັງ ສ. ອາເມຣິກາ ສົ່ງເຮືອບັນທຸກເຮືອບິນ ໄປເມືອງທ່າ Busan ທາງພາກໃຕ້ຂອງ ສ. ເກົາຫຼີ ເພື່ອສະແດງກຳລັງຕໍ່ຕ້ານ ສປປ ເກົາຫຼີ, ເປັນຄັ້ງທຳອິດທີ່ເຮືອບັນທຸກເຮືອບິນດັ່ງກ່າວ ໄປ

ຈອດທີ່ທ່າເຮືອ ສ. ເກົາຫຼີ ນັບແຕ່ ທ່ານ ໂດນັນ ທຣໍາ (Donald Trump) ໄດ້ເຂົ້າຮັບຕໍາແໜ່ງ. ນອກຈາກນັ້ນ, ສ. ອາເມລິກາ ແລະ ສ. ເກົາຫຼີ ໄດ້ຊ້ອມຮົບຮ່ວມກັນ ທີ່ມີຊື່ວ່າ Freedom Shield 2025 ແຕ່ວັນທີ 10-20 ມີນາ 2025. ສ່ວນ ສປປ ເກົາຫຼີ ກໍໄດ້ຕອບໂຕ້ຄືນ ໂດຍການທົດລອງຍິງລູກສອນໄຟ ຈໍານວນຫຼາຍຄັ້ງ ຈາກຖານຍິງ ແຂວງຮາວັງແຮ ທາງພາກໃຕ້ຂອງ ສປປ ເກົາຫຼີ ກ່ອນຈະຕົກລົງສູ່ທະເລພາກຕາເວັນອອກຂອງປະເທດ ແລະ ກຽມພ້ອມຢ່າງເຕັມທີ່ໃນການໂຈມຕີ ທາງນິວເຄລຍ. ແຕ່ແນວໃດກໍຕາມ, ສ. ອາເມຣິກາ ແລະ ສ. ເກົາຫຼີ ຍັງບໍ່ລົງລອຍກັນກ່ຽວກັບງົບປະມານການທະຫາທີ່ ສ. ອາເມຣິກາຊ່ວຍ ສ. ເກົາຫຼີ, ຊຶ່ງໃນເດືອນ ຕຸລາ ປີຜ່ານມາ, ກ່ອນຈະມີການເລືອກຕັ້ງອາເມຣິກາ ທ່ານ ທຣໍາ (Trump) ໄດ້ຮຽກຮ້ອງໃຫ້ ສ. ເກົາຫຼີ ຈ່າຍເງິນໃຫ້ ສ. ອາເມຣິກາ ປີລະ 10 ຕື້ໂດລາສະຫະລັດ ເພື່ອຮັບປະກັນການປ້ອງກັນປະເທດ ສ. ເກົາຫຼີ. ປັດຈຸບັນ ສ. ເກົາຫຼີ ຈ່າຍເງິນໃຫ້ແກ່ ສ. ອາເມຣິກາ ຕໍ່ປີ ພຽງ 01 ຕື້ໂດລາສະຫະລັດ.

ວັນທີ 08 ມີນາ 2025, ສານນະຄອນຫຼວງເຊອູນ ໄດ້ປ່ອຍຕົວ ທ່ານ ຢູນ ຊ໋ອກ ຢອນ (Yoon Suk Yeol) ອອກຈາກສະຖານກັກຂັງ ຫຼັງຈາກໄດ້ຖືກຄວບຄຸມໂຕເປັນເວລາ 52 ວັນ ນັບແຕ່ວັນທີ 15 ມັງກອນ 2025 ເປັນຕົ້ນມາ ໃນຂໍ້ຫາເປັນແກນນໍາກໍ່ກະບົດ, ເຊິ່ງການປ່ອຍໂຕ ແມ່ນເພື່ອເຂົ້າສູ່ຂະບວນການສືບສວນສອບສວນ ໃນກາງເດືອນມີນາ ຜ່ານມາ. ພາຍຫຼັງໄດ້ຮັບການປ່ອຍໂຕ ທ່ານ ຢູນ ຊ໋ອກ ຢອນ (Yoon Suk Yeol) ໄດ້ກ່າວຂອບໃຈ ແລະ ຊົມເຊີຍຄວາມກ້າຫານຂອງຝ່າຍຕຸລາການ ໃນການແຂ້ໄຂບັນຫາຄັ້ງນີ້. ແຕ່ຢ່າງໃດກໍ່ຕາມ ທ່ານ ຍັງຄົງຖືກໂຈະໃນການປະຕິບັດໜ້າທີ່ເປັນ ປະທານາທິບໍດີ ສ. ເກົາຫຼີ ເນື່ອງຈາກວ່າສານລັດຖະທໍາມະນູນ ຍັງບໍ່ທັນມີຄໍາພິພາກສາວ່າທ່ານມີຄວາມຜິດແທ້. ສ່ວນ ທ່ານ Choi Sang-mok, ຮັກສາການປະທານາທິບໍດີ ສ. ເກົາຫຼີ ໄດ້ຮຽກຮ້ອງໃຫ້ປະຊາຊົນຢຸດຕິການຊຸມນຸມ ແລະ ຢຸດຕິໃຊ້ຄວາມຮຸນແຮງ ໃນໄລຍະລໍຖ້າການຕັດສິນຄະດີຂອງ ທ່ານ ທ່ານ ຢູນ ຊ໋ອກ ຢໍ (Yoon Suk Yeol) ແລະ ສັ່ງໃຫ້ຕໍາຫຼວດ ແລະ ທະຫານ ກະຈາຍກໍາລັງເພື່ອຮັກສາຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດ ແລະ ສະຖານທີ່ສໍາຄັນຕ່າງໆ ໃນມື້ຕັດສິນຄະດີຂອງ ທ່ານ ຢູນ ຊ໋ອກ ຢອນ (Yoon Suk Yeol).

ວັນທີ 11 ມີນາ 2025, ທ່ານ ໂຣດຣີໂກ ໂຣອາ ດູເຕີເຕ (Rodrigo Duterte), ອະດີດປະທານາທິບໍດີຟີລິບປິນ ໄດ້ຖືກຕໍາຫຼວດຄວບຄຸມຕົວຕາມໝາຍຈັບ ຂອງອົງການຕໍາຫຼວດອາຍາສາກົນ ໃນຂໍ້ຫາ ກໍ່ອາດສະຍາກໍາ ໃນການກວດລ້າງ ແລະ ຜູ້ຄ້າຂາຍຢາເສບຕິດ ເຮັດໃຫ້ມີຜູ້ເສຍຊີວິດຫຼາຍພັນຄົນ ໃນໄລຍະທີ່ທ່ານດໍາລົງຕໍາແໜ່ງ, ປັດຈຸບັນເຈົ້າໜ້າທີ່ສາກົນໄດ້ນໍາຕົວໄປ ທ່ານ ໄປກັກຂັງຢູ່ທີ່ ຄຸກຂອງປະເທດໂຮນລັງ, ນະຄອນຫຼວງເຮັກ. ແຕ່ວ່າ ຟີລິບປິນໄດ້ຖອນຕົວອອກຈາກສານອາຍາສາກົນຢ່າງເປັນທາງການໃນປີ 2019.

ໃນວັນທີ 22 ມີນາ 2025, ໄດ້ມີກອງປະຊຸມພົບປະສາມຝ່າຍ ລະຫວ່າງລັດຖະມົນຕີຕ່າງປະເທດຂອງ ຍີ່ປຸ່ນ, ສປ ຈີນ ແລະ ສ. ເກົາຫຼີ ທີ່ນະຄອນຫຼວງໂຕກຽວ, ປະເທດຍີ່ປຸ່ນ ສາມຝ່າຍເຫັນດີໃນການຮ່ວມມືທີ່ຈໍາເປັນກ່ຽວກັບບັນຫາຄວາມໝັ້ນຄົງ ແລະ ເສດຖະກິດອາຊີຕາເວັນອອກ, ສະໜັບສະໜູນເພີ່ມທະວີການຮ່ວມມື "ຮ່ວມກັນຕ້ານກັບຄວາມສ່ຽງ" ແລະ ຊຸກຍູ້ "ຄວາມເຂົ້າໃຈເຊິ່ງກັນແລະກັນ" ລະຫວ່າງປະຊາຊົນຂອງຕົນ. ຊຶ່ງສາມປະເທດມີຂະໜາດເສດຖະກິດລວມກັນເກືອບ 1,6 ຕື້ໂດລາສະຫະລັດ ແລະ ຜະລິດຕະພັນເສດຖະກິດເກີນ 24 ພັນຕື້ໂດລາສະຫະລັດ. ສ. ເກົາຫຼີ ຍັງຮຽກຮ້ອງໃຫ້ເບິ່ງປະຫວັດສາດຄືນໃໝ່ ຕາມຄວາມເປັນຈິງ ແລະ ສະເໜີໃຫ້ ປົດອາວຸດນິວເຄຼຍຂອງ ສປປ ເກົາຫຼີ ແລະ ຮຽກຮ້ອງໃຫ້ຢຸດຕິການຮ່ວມມືທາງທະຫານລະຫວ່າງ ສປປ ເກົາຫຼີ ແລະ ຣັດເຊຍ.

**2) ສະພາບການຢູ່ພາກພື້ນເອີຣົບ-ອາເມຣິກາ**

**ບັນຫາອູແກຣນ-ຣັດເຊຍ:**

ພາຍຫຼັງການເຈລະຈາຫຼາຍຄັ້ງ ລະຫວ່າງຜູ້ແທນ ສ. ອາເມຣິກາ ແລະ ຣັດເຊຍ, ອູແກຣນ, ໃນວັນທີ 24 ມີນາ 2025 ອູແກຣນ ແລະ ຣັດເຊຍ ໄດ້ເຊັນຂໍ້ຕົກລົງເຫັນດີຢຸດຍິງ ການໂຈມຕີດ້ານພະລັງງານ, ໂຄງສ້າງພື້ນຖານຂອງກັນ ແລະ ກັນ ລວມທັງການຕົກລົງຢຸດຍິງໃນທະເລດໍາ. ແຕ່ ຕົວຈິງແລ້ວ ຕ່າງຝ່າຍອ້າງວ່າ ອີກຝ່າຍລະເມີດຂໍ້ຕົກລົງຢຸດຍິງດັ່ງກ່າວ. ສ່ວນບັນດາປະເທດຕາເວັນຕົກຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ, ໃນນັ້ນ ອັງກິດ ຈະໃຫ້ເງິນກູ້ຢືມປະມານ 2.26 ຕື້ປອນ ເພື່ອຍົກສູງຄວາມສາມາດທາງທະຫານໃຫ້ແກ່ອູແກຣນ. ຂະນະທີ່, ສ. ອາເມຣິກາ ໄດ້ຕົກລົງທີ່

ຈະກັບມາໃຫ້ການຊ່ວຍເຫຼືອທາງທະຫານ ແລະ ແບ່ງປັນຂໍ້ມູນຂ່າວສານ ໃຫ້ກັບອູແກຣນ ຫຼັງຈາກທີ່ໄດ້ລະງັບໄປກ່ອນໜ້ານີ້.

**ການເມືອງໃນ ສ. ອາເມຣິກາ**

ສ. ອາເມຣິກາ ສືບຕໍ່ດຳເນີນມາດຕະການພາສີນຳເຂົ້າສິນຄ້າ ຈາກປະເທດການາດາດ້ານພະລັງງານ ໃນອັດຕາ 10%, ເມັກຊິກ ໃນອັດຕາ 25% ແລະ ຈາກຈີນ ໃນອັດຕາ 20% ເພື່ອຕອບໂຕ້ ການໄຫຼເຂົ້າຂອງຢາເສບຕິດ ແລະ ຄົນເຂົ້າເມືອງທີ່ຜິດກົດໝາຍ. ສ່ວນຈີນ ກໍມີມາດຕະການຕອບໂຕ້ ໂດຍຈະເນັ້ນໃສ່ສິນຄ້າກະສິກຳ ແລະ ສະບຽງອາຫານ. ພ້ອມດຽວກັນນີ້, ການາດາ ກັງວົນວ່າ ອັດຕາພາສີຈະສົ່ງຜົນກະທົບຕໍ່ເສດຖະກິດຂອງທັງສອງປະເທດ ແລະ ກຳລັງກຽມມາດຕະການຕອບໂຕ້ຄືນ ໂດຍການປະກາດລາຍຊື່ສິນຄ້າ 1.256 ລາຍການ ທີ່ຈະເກັບພາສີຕໍ່ ສ. ອາເມຣິກາ ໃນອັດຕາ 25%. ນອກຈາກນັ້ນ, ທ່ານ ທຣຳ (Trump) ຍັງໄດ້ປະກາດເກັບພາສີ 25% ສຳລັບການນຳເຂົ້າເຫຼັກ ແລະ ອາລູມິນຽມ ຈາກທຸກປະເທດ ຈະມີຜົນບັງຄັບໃຊ້ໃນວັນທີ 12 ມີນາ 2025 ເປັນຕົ້ນໄປ ແລະ ຍັງຈະເກັບພາສີເພື່ອຕອບໂຕ້ກັບປະເທດຕ່າງໆ, ລວມທັງການເກັບພາສີ ໃນອັດຕາ 25% ຕໍ່ສະຫະພາບເອີຣົບ ເຮັດໃຫ້ເກີດຄວາມເຄັ່ງຕຶງດ້ານການຄ້າ ລະຫວ່າງ ສ. ອາເມຣິກາ ກັບ ຫຼາຍປະເທດເພີ່ມຂຶ້ນ. ສ່ວນສະຫະພາບເອີຣົບ ກໍປະກາດຂຶ້ນພາສີສິນຄ້າປະເພດ ເຮືອ, ເຫຼົ້າ ແລະ ລົດຈັກ ຈາກ ສ. ອາເມຣິກາ ໂດຍຈະເລີ່ມບັງຄັບໃຊ້ໃນວັນທີ 01 ເມສາ 2025, ຂະນະທີ່ ຜູ້ຜະລິດສິນຄ້າໃນ ສ. ອາເມຣິກາ ຮຽກຮ້ອງໃຫ້ມີການຍົກເວັ້ນພາສີສຳລັບວັດຖຸດິບທີ່ ສ. ອາເມຣິກາ ບໍ່ສາມາດຜະລິດພາຍໃນປະເທດ ເຊັ່ນ: ໂກໂກ້, ໝາກໄມ້ ແລະ ເຄື່ອງເທດ. ຄາດວ່າ ໃນຕໍ່ໜ້າ ສ. ອາເມຣິກາ ຈະສືບຕໍ່ນຳໃຊ້ມາດຕະການດ້ວຍການຂຶ້ນພາສີຕໍ່ປະເທດຕ່າງໆຕື່ມອີກ.

**4. ຂໍ້ຂັດແຍ່ງຢູ່ພາກພື້ນຕາເວັນອອກກາງ**

ນັບແຕ່ເກີດການປະທະກັນ ລະຫວ່າງ ອິດສະຣາແອນ ກັບ ປາແລັດສະຕິນ ຕັ້ງແຕ່ວັນທີ 07 ຕຸລາ 2023 ເປັນຕົ້ນມາ, ການເຄື່ອນໄຫວທາງການທະຫານ ຂອງອິດສະຣາແອນ ຢູ່ເຂດກາຊາ ໄດ້ເຮັດໃຫ້ຊາວປາແລັດສະຕິນເສຍຊີວິດແລ້ວ 48,365 ຄົນ ແລະ ບາດເຈັບ 111,780 ຄົນ. ເຖິງແມ່ນອິດສະຣາແອນ ກ່າວວ່າ ຈະສືບຕໍ່ຈັດຕັ້ງປະຕິບັດສັນຍາຢຸດຍິງ ຢູ່ເຂດກາຊາ ໃນໄລຍະເດືອນຖືສິນອົດ ຫຼື ບຸນຣາມາດັນຂອງຊາວມຸສລິມ (Ramadan) ຕາມຂໍ້ສະເໜີຂອງ ສ. ອາເມຣິກາ ແລະ ບຸນປັດສະຄາເຊິ່ງເປັນວັນລະນຶກການປົດປ່ອຍຈາກການເປັນຂ້າທາດຂອງຊາວຢິວ. ແຕ່ກຸ່ມຮາມາສ ກ່າວຫາວ່າ ອິດສະຣາແອນ ບໍ່ປະຕິບັດຕາມສັນຍາ, ຊຶ່ງໝາຍເຖິງການປ່ອຍຕົວປະກັນຊາວປາແລັດສະຕິນທັງໝົດ ທີ່ຍັງຢູ່ໃນເຂດກາຊາ ແລະ ການຖອນກຳລັງທັງໝົດຂອງອິດສະຣາແອນ ຈາກດິນແດນປາແລັດສະຕິນ ແລະ ຢຸດຕິສົງຄາມ. ຂະນະທີ່, ອິດສະຣາແອນ ໄດ້ຕັດຄວາມຊ່ວຍເຫຼືອດ້ານມະນຸດສະທຳ ແລະ ລະງັບ ບໍ່ໃຫ້ລົດບັນທຸກເຂົ້າໄປໃນເຂດກາຊາ, ຕ້ອງການໃຫ້ຂະຫຍາຍຂໍ້ຕົກລົງຢຸດຍິງອອກໄປ ຈົນເຖິງກາງເດືອນ ເມສາ ແຕ່ຮາມາສ ກ່າວວ່າ ບໍ່ຢາກໃຫ້ຂະຫຍາຍ ຢາກໃຫ້ເລີ່ມເຈລະຈາຢຸດຍິງໄລຍະທີ 02 ທັນທີ ເພື່ອນຳໄປສູ່ການຢຸດຍິງແບບຖາວອນ. ອິດສະຣາແອນ ໄດ້ປະຕິເສດທີ່ຈະເຂົ້າຮ່ວມການເຈລະຈາຂໍ້ຕົກລົງຢຸດຍິງ ໄລຍະທີ 02 ຈາກຂໍ້ຕົກລົງຢຸດຍິງ ໄລຍະທີ 01 ທີ່ສິ້ນສຸດລົງ ເຊິ່ງໃນວັນທີ 18 ມີນາ 2025, ກອງທັບອິດສະຣາແອນ ໄດ້ໂຈມຕີທາງອາກາດຢ່າງຮຸນແຮງໃສ່ພື້ນທີ່ຫຼາຍແຫ່ງທາງພາກເໜືອ ແລະ ພາກກາງຂອງເຂດກາຊາ, ເຮັດໃຫ້ເຮືອນຊານຂອງປະຊາຊົນ, ສະຖານທີ່ທາງສາດສະໜາ, ໂຮງຮຽນ ແລະ ຄ້າຍຜູ້ລີ້ໄພ ຖືກທຳລາຍຢ່າງໜັກໜ່ວງທີ່ສຸດ ນັບຕັ້ງແຕ່ສິ້ນສຸດຂໍ້ຕົກລົງຢຸດຍິງໄລຍະທີ 01 ລະຫວ່າງອິດສະຣາແອນ ແລະ ກຸ່ມຮາມາສ ໃນວັນທີ 01 ມີນາ 2025 ປັນຕົ້ນມາ, ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 100 ຄົນ.

ໃນວັນທີ 16 ມີນາ 2025, ສ. ອາເມຣິກາ ໄດ້ດຳເນີນການໂຈມຕີທາງອາກາດໃນເຢເມນ ອີກຄັ້ງ ໂດຍໄດ້ໂຈມຕີສຳນັກງານຂອງລັດຖະບານໃນເມືອງ Al-Hazm ທີ່ຕັ້ງຢູ່ທາງພາກຕາເວັນອອກສ່ຽງເໜືອຂອງນະຄອນຫຼວງຊານາ ແລະ ພື້ນທີ່ຕ່າງໆທີ່ຢູ່ພາຍໃຕ້ການຄວບຄຸມຂອງກຸ່ມຮູຕີ ແລະ ກ່າວວ່າ ຈະໂຈມຕີທາງອາກາດຕໍ່ໄປ ຈົນກວ່າກຸ່ມຮູຕີ ຈະຢຸດໂຈມຕີເຮືອເດີນທະເລລະຫວ່າງໃນທະເລແດງ, ພ້ອມທັງກ່າວວ່າ ອີຣານ ຈະຕ້ອງຮັບຜິດຊອບຕໍ່ຜົນການໂຈມຕີຕ່າງໆໃນທະເລແດງຂອງກຸ່ມຮູຕີ, ຂະນະທີ່ ກຸ່ມຮູຕີ ສັນຍາວ່າ ຈະຕອບໂຕ້ການໂຈມຕີຂອງ ສ. ອາເມຣິກາ ແລະ

ກັບມາໂຈມຕີເຮືອບັນທຸກສິນຄ້າທີ່ກ່ຽວຂ້ອງກັບອິດສະຣາແອນອີກຄັ້ງ, ຊຶ່ງໃນວັນທີ 18 ມີນາ 2025, ກຸ່ມຮູຕີ ປະກາດວ່າ ໄດ້ໂຈມຕີເຮືອບັນທຸກສິນຄ້າຂອງ ສ.ອາເມຣິກາ ໃນທະເລແດງ.

ວັນທີ 14 ມີນາ 2025, ກອງບັນຊາການສູນກາງອາເມຣິກາ ກ່າວວ່າ: ໃປະຕິບັດການບຸກໂຈມຕີ ກຸ່ມ ISIS ຢູ່ແຂວງ Anbar ຂອງອີຣັກ ໄດ້ສັງຫານ ຜູ້ນຳທາງການເມືອງຂອງກຸ່ມ ISIS ຊື່ວ່າ Abdullah Makki Muslih al-Rifai ຊຶ່ງເອີ້ນວ່າ Abu Khadijah ຊຶ່ງເປັນຜູ້ນຳເບີ 2 ຂອງກຸ່ມ ISIS, ຮັບຜິດຊອບຕໍ່ການປະຕິບັດງານ, ການ ຂົນສົ່ງ ແລະ ການວາງແຜນທົ່ວໂລກຂອງ ISIS ແລະ ຮັບຜິດຊອບດ້ານການເງິນຂອງການປະຕິບັດງານທົ່ວໂລກ ຂອງ ISIS.

**ສະພາບການໃນຊີຣີ**

ການປະທະກັນຢ່າງໜັກໜ່ວງ ລະຫວ່າງ ທະຫານຂອງລັດຖະບານຮັກສາການ ແລະ ກອງກຳລັງທີ່ສະໜັບສະ ໜູນ ທ່ານ ອາວ ອາດສາດ (Al-Assad), ອະດີດປະທານາທິບໍດີຊີຣີ ຢູ່ທາງພາກໃຕ້ຂອງ ຊີຣີ ໃນວັນທີ 10 ມີນາ 2025, ເຮັດໃຫ້ມີຜູ້ເສຍຊີວິດຫຼາຍກວ່າ 1,300 ຄົນ; ຮັກສາການປະທານາທິບໍດີ ໄດ້ກ່າວວ່າ ເຫດການດັ່ງການໄດ້ຮັບ ການສະໜັບໜູນຈາກບັນດາປະເທດມະຫາອຳນາດ; ຮຽກຮ້ອງໃຫ້ຄົນພາຍໃນຊາດກັບມາສາມັກຄີກັນ ແລະ ປະກາດ ວ່າ ຈະລົງໂທດຜູ້ທີ່ມີສ່ວນກ່ຽວຂ້ອງກັບນອງເລືອດດັ່ງກ່າວ.

## II. ການເຄື່ອນໄຫວຂອງການນຳ ຄະນະພົວພັນຕ່າງປະເທດສູນກາງພັກ

**1) ສະຫາຍຮັກສາການເລຂາຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ໃຫ້ສຳພາດ ຕໍ່ໜັງສືພິມປະຊາຊົນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 70 ປີ.**



**"ຈົດຈຳບຸນຄຸນຂອງພັກ, ເສີມຂະຫຍາຍວຽກງານການຕ່າງປະເທດ ໃຫ້ເຕີບໃຫຍ່ເຂັ້ມແຂງ"**

ໃນທ່າມກາງບັນຍາກາດທີ່ທົ່ວພັກ ແລະ ທົ່ວປວງຊົນລາວ ພວມສ້າງຜົນງານຕ້ອນຮັບວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 70 ປີ, ຂ້າພະເຈົ້າ ມີຄວາມປິຕິຊົມຊື່ນ ແລະ ເປັນກຽດຢ່າງສູງ ທີ່ໄດ້ມີໂອກາດມາສະແດງຄວາມຮູ້ສຶກ ກ່ຽວກັບ ພັກ ປປ ລາວ ໂດຍສະເພາະແມ່ນການນຳພາຂອງພັກ ຕໍ່ວຽກງານຕ່າງປະເທດ ໂດຍຜ່ານທາງສື່ມວນຊົນ.

ເມື່ອຫວນຄືນຂະບວນວິວັດ ແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງ ພັກປະຊາຊົນ ປະຕິວັດລາວ ນັບແຕ່ມື້ສ້າງຕັ້ງ ໃນວັນທີ 22 ມີນາ 1955 ເປັນຕົ້ນມານັ້ນ, ພວກເຮົາ ໄດ້ຮູ້ດີແລ້ວວ່າ: ປະຫວັດສາດແຫ່ງການຕໍ່ສູ້ປະຕິວັດ ຂອງປະຊາຊົນລາວບັນດາເຜົ່າ, ການປົກປັກຮັກສາ ແລະ ການສ້າງສາພັດທະນາປະເທດຊາດ ໃນໄລຍະ 70 ປີ ຜ່ານມາ ໄດ້ຕິດພັນກັບການນຳພາຂອງພັກ ປປ ລາວ ມາໂດຍຕະຫລອດ. ພັກກຳເນີດມາຈາກປະຊາຊົນ, ເປັນຕົວແທນຂອງປະຊາຊົນ ແລະ ເປັນບ່ອນເຕົ້າໂຮມກຳລັງແຮງ ແລະ ຄວາມສາມັກຄີອັນປຶກແຜ່ນຂອງປວງຊົນລາວທັງຊາດ, ນຳພາປວງຊົນລາວ ເດີນຕາມເສັ້ນທາງອັນຖືກຕ້ອງ, ມີໄຫວພິບ ແລະ ມີການພັດທະນາທີ່ສອດຄ່ອງກັບສະພາບການຕົວຈິງຂອງປະເທດ; ພັກ ໄດ້ນຳພາປວງຊົນລາວ ຕໍ່ສູ້ຍາດເອົາໄຊຊະນະ ຈາກຈັກກະພັດຜູ້ຮຸກຮານ ໄດ້ຢ່າງສົມບູນ ແລະ ສືບຕໍ່ຊີ້ນຳ-ນຳພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ເຕີບໃຫຍ່ເຂັ້ມແຂງ. ຕະຫຼອດ 70 ປີ ພາຍໃຕ້ການນຳພາຂອງພັກ, ປະເທດເຮົາ ສາມາດຮັບປະກັນໄດ້ສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງ ແລະ ຍົກລະດັບດີຂຶ້ນ ເປັນກ້າວໆ.

ໂດຍຄຽງຄູ່ກັບຜົນສຳເລັດລວມດັ່ງກ່າວ, ເວົ້າສະເພາະໃນຂະແໜງການຕ່າງປະເທດ, ພັກເຮົາ ໄດ້ວາງແນວທາງນະໂຍບາຍການຕ່າງປະເທດ ທີ່ຖືກຕ້ອງ ແລະ ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ ໃນແຕ່ລະໄລຍະ; ໂດຍໃນໄລຍະການເຄື່ອນໄຫວປະຕິວັດ, ພັກໄດ້ຖືສຳຄັນການເປີດກ້ວາງການຮ່ວມມືກັບສາກົນ, ຍາດແຍ່ງເອົາ ຄວາມເຫັນອົກເຫັນໃຈ, ການສະໜັບສະໜູນ ແລະ ການຊ່ວຍເຫຼືອຂອງບັນດາກຳລັງກ້າວໜ້າ ແລະ ປະຊາຊາດໃນໂລກ; ຕົກມາຮອດໄລຍະໃໝ່, ພັກ ກໍ່ໄດ້ສືບຕໍ່ຜັນຂະຫຍາຍແນວຄິດຊີ້ນຳ ແລະ ພຶດຕິກຳຕົວຈິງຂອງພັກ ໃນການເຄື່ອນໄຫວວຽກງານຕ່າງປະເທດ ເພື່ອສ້າງສະພາບແວດລ້ອມສາກົນ ທີ່ເອື້ອອຳນວຍໃຫ້ແກ່ການປະຕິບັດ 2 ໜ້າທີ່ຍຸດທະສາດຂອງພັກ; ສືບຕໍ່ຍຶດໝັ້ນນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ; ສືບຕໍ່ດຳເນີນການເຄື່ອນໄຫວວຽກງານຕ່າງປະເທດແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບ

ແບບ ແລະ ຫຼາຍລະດັບ ໂດຍການສົມທົບແໜ້ນຢ່າງກົມກຽວ ວຽກງານການທູດສາຍພັກ, ການທູດສາຍລັດ ແລະ ການທູດປະຊາຊົນ ເພື່ອເປັນເຄື່ອງມືໃນການຕິດຕໍ່ພົວພັນ, ຕໍ່ລອງ ແລະ ເຈລະຈາ ເພື່ອປົກປ້ອງຜົນປະໂຫຍດລວມ ຂອງຊາດ ດ້ວຍຫຼາຍວິທີການ ທັງຮ່ວມມື, ທັງຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອຈາກສາກົນ.

**ໃນການພົວພັນດ້ານພັກ**, ພັກເຮົາ ໄດ້ເອົາໃຈໃສ່ ເພີ່ມທະວີ ແລະ ເສີມຂະຫຍາຍ ການພົວພັນຮ່ວມມືແບບທາງ ກວ້າງ ແລະ ທາງເລິກ ກັບບັນດາພັກເພື່ອນມິດຍຸດທະສາດຮ່ວມອຸດົມການ ຜ່ານກົນໄກການຮ່ວມມືຕ່າງໆ ເຊັ່ນ: ກອງປະຊຸມສຸດຍອດ 03 ພັກ ລາວ-ຫວຽດນາມ-ກຳປູເຈຍ, ການພົບປະປະຈຳປີ 02 ກົມການເມືອງ ລາວ-ຫວຽດນາມ, ກອງປະຊຸມສຸດຍອດປະຈຳປີ ລາວ-ກຳປູເຈຍ, ການພົບປະປະຈຳປີ 02 ການນຳຂັ້ນສູງສຸດຂອງພັກ, ລັດ ລາວ-ຈີນ ແລະ ອື່ນໆ ພ້ອມກັນນັ້ນ ກໍໄດ້ເສີມຂະຫຍາຍການພົວພັນຮ່ວມມື ກັບບັນດາພັກການເມືອງ-ຂະບວນການ ກ້າວໜ້າສາກົນ ດ້ວຍຫຼາຍຮູບການ ແລະ ຫຼາຍລະດັບ; ໃນຂອບຫຼາຍຝ່າຍ ກໍໄດ້ສືບຕໍ່ພົວພັນ ແລະ ເຂົ້າຮ່ວມກອງ ປະຊຸມສາກົນຂອງບັນດາພັກການເມືອງໂລກ ຢ່າງຕັ້ງໜ້າ ໂດຍຜ່ານຂອບການພົວພັນຫຼາຍຝ່າຍທີ່ພັກເຮົາເປັນ ສະມາຊິກ ແລະ ບໍ່ເປັນສະມາຊິກ ເຊັ່ນ: ກອງປະຊຸມສາກົນຂອງບັນດາພັກກອມມູນິດ ແລະ ກຳມະກອນ (IMCWP), ເຊິ່ງພັກເຮົາໄດ້ຖືກຮັບຮອງເຂົ້າເປັນສະມາຊິກວິຊາການໃນກອງປະຊຸມດັ່ງກ່າວ ໃນປີ 2022, ກອງປະຊຸມພັກກອມມູ ນິດຈີນ ກັບພັກການເມືອງສາກົນ, ກອງປະຊຸມພັກກອມມູນິດຈີນ ກັບບັນດາພັກການເມືອງ 05 ປະເທດລຸ່ມແມ່ນ້ຳ ຂອງ, ກອງປະຊຸມໂຕະມົນລັດເຊຍ ກັບພັກການເມືອງ ບັນດາປະເທດສະມາຊິກອາຊຽນ, ເວທີສຳມະນາສາກົນສັງຄົມ ນິຍົມ, ກອງປະຊຸມສາກົນຂອງບັນດາພັກການເມືອງອາຊີ (ICAPP) ແລະ ກອງປະຊຸມສາກົນອື່ນໆ.

**ໃນດ້ານການພົວພັນສາຍລັດ**, ພັກເຮົາ ໄດ້ເອົາໃຈໃສ່ໃນການເພີ່ມທະວີສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານກັບ ສສ. ຫວຽດນາມ, ສາຍພົວພັນຄູ່ຮ່ວມມືຍຸດທະສາດ ຮອບດ້ານ ໝັ້ນຄົງຍາວນານ ຕາມທິດ 04 ດີ ແລະ ການສ້າງເປັນຄູ່ຮ່ວມຊາຕາກຳກັບ ສປ. ຈີນ, ສາຍພົວພັນ ມິດຕະພາບ ອັນເປັນມູນເຊື້ອ ທີ່ມີມາແຕ່ດົນນານກັບ ສປປ. ເກົາຫຼີ, ສ. ກູບາ, ລັດເຊຍ, ກຳປູເຈຍ ພ້ອມທັງເສີມ ຂະຫຍາຍການຮ່ວມມືກັບບັນດາປະເທດໃຫຍ່, ປະເທດມະຫາອຳນາດ, ກັບທຸກປະເທດ ແລະ ອົງການຈັດຕັ້ງສາກົນ ບົນພື້ນຖານການເຄົາລົບເອກະລາດ, ອຳນາດອະທິປະໄຕ ກໍຄື 5 ຫຼັກການ ຢູ່ຮ່ວມກັນໂດຍສັນຕິ, ຕ່າງຝ່າຍຕ່າງມີຜົນ ປະໂຫຍດຮ່ວມກັນ; ປະຕິບັດພັນທະຂອງຕົນ ພາຍໃຕ້ສົນທິສັນຍາສາກົນຕ່າງໆ ທີ່ ສປປ ລາວ ເປັນພາຄີ, ທັງຍາດ ແຍ່ງ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຕົນໃນເວທີພາກພື້ນ ແລະ ສາກົນ. ພ້ອມກັນນັ້ນ ກໍໄດ້ ເອົາໃຈໃສ່ປະກອບສ່ວນໃນຂອບຫຼາຍຝ່າຍຕ່າງໆ ເພື່ອຍົກສູງຖານະບົດບາດຂອງ ສປປ ລາວ ໃນເວທີພາກພື້ນ ແລະ ສາກົນ ໃຫ້ສູງເດັ່ນຂຶ້ນເລື້ອຍໆ ໂດຍສະເພາະ ອັນທີ່ພົ້ນເດັ່ນ ກໍແມ່ນການເຄື່ອນໄຫວໃນຂອບອາຊຽນ ເຊິ່ງ ສປປ ລາວ ກໍໄດ້ເປັນປະທານໝູນວຽນຂອງອາຊຽນ ໃນປີ 2024 ທີ່ຜ່ານມາ ດ້ວຍຜົນສຳເລັດອັນຈົບງາມ.

**ໃນດ້ານການທູດປະຊາຊົນ** ກໍ່ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ໃນການເສີມສ້າງສາຍພົວພັນທີ່ດີ ລະຫວ່າງ ປະຊາຊົນກັບປະຊາຊົນ, ໄດ້ຊຸກຍູ້ການພົວພັນຮ່ວມມື ແລະ ຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອ ຂອງບັນດາອົງ ການຈັດຕັ້ງມະຫາຊົນ, ບັນດາສະມາຄົມມິດຕະພາບ ແລະ ມູນນິທິຕ່າງໆ ເຊິ່ງໄດ້ເປັນເຄື່ອງມືທີ່ສຳຄັນໃນການຊຸກຍູ້ ຄວາມເຂົ້າອົກເຂົ້າໃຈຈາກສາກົນ ແລະ ສາມາດຍາດເອົາການຊ່ວຍເຫຼືອຕົວຈິງ ມາສູ່ປະຊາຊົນລາວ.

ມາເຖິງປັດຈຸບັນ, ສປປ ລາວ ໄດ້ມີການພົວພັນກັບ 143 ພັກການເມືອງ, ສະມາຄົມມິດຕະພາບລາວ ກັບ ຕ່າງປະເທດ 20 ສະມາຄົມ ແລະ ຄະນະສັນຕິພາບ-ສາມັກຄີຂອງລາວ 01 ຄະນະ, ມີການພົວພັນການທູດກັບ 151 ປະເທດ, ໂດຍມີສຳນັກງານການທູດລາວ ປະຈຳ 27 ປະເທດ ພ້ອມກັນນັ້ນ ກໍຍັງໄດ້ເປັນພາຄີ ຂອງບັນດາຂອບການ ຮ່ວມມືສາກົນຕ່າງໆ ຢ່າງກວ້າງຂວາງ.

ໂດຍລວມແລ້ວເຫັນວ່າ, ວຽກງານການຕ່າງປະເທດຂອງພັກເຮົາ ແມ່ນນັບມື້ນັບເປີດກວ້າງ ແລະ ເຕີບໃຫຍ່ ຂະຫຍາຍຕົວ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ ພາລະກິດປົກປັກຮັກສາ, ສ້າງສາພັດທະນາ ສປປ ລາວ ແລະ ສ້າງຄວາມເຊື່ອໝັ້ນອັນໜັກແໜ້ນໃນການຍາດແຍ່ງ ແລະ ຮັບເອົາການສະໜັບສະໜູນ ຊ່ວຍເຫຼືອຈາກເພື່ອນ ມິດຍຸດທະສາດ ແລະ ວົງຄະນະຍາດສາກົນ ບົນຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມ ເຂັ້ມແຂງດ້ວຍຕົນເອງ ແລະ ບົນພື້ນຖານການເສີມຂະຫຍາຍເນື້ອໃນຈິດໃຈ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງ ພັກ ຕາມທິດ “ເພີ່ມທະວີຄວາມເປັນເຈົ້າການປະຕິບັດການພົວພັນກັບຕ່າງປະເທດ, ສ້າງເງື່ອນໄຂສະດວກ ແລະ ນຳ ຜົນປະໂຫຍດຕົວຈິງ ໃຫ້ແກ່ການພັດທະນາປະເທດຊາດ”.

ທັງໝົດທີ່ກ່າວມານັ້ນ ເປັນພຽງພາກສ່ວນໜຶ່ງ ຂອງຜົນສຳເລັດທີ່ຍາດມາໄດ້ ພາຍໃຕ້ການນຳພາຂອງພັກ ແລະ ກໍເປັນໜຶ່ງ ໃນສິ່ງຢັ້ງຢືນຢ່າງໜັກແໜ້ນວ່າ: ການນຳພາຂອງພັກເຮົາ ປຽບເໝືອນແສງສະຫວ່າງ ທີ່ຊີ້ທິດເຍືອງທາງ ແລະ ເປັນດັ່ງເສັ້ນດ້າຍສີແດງ ທີ່ສອດຫ້ອຍໄປທຸກຂົງເຂດວຽກງານ; ທຸກໄຊຊະນະ ແລະ ຜົນສຳເລັດຂອງປະຊາຊົນລາວ ບໍ່ວ່າຈະເປັນໄລຍະການປະຕິວັດໃນເມື່ອກ່ອນ ກໍຄືໃນໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດໃນປັດຈຸບັນ ແມ່ນບໍ່ສາມາດເກີດຂຶ້ນໄດ້ ຖ້າບໍ່ມີການນຳພາຂອງພັກ. ພວກເຮົາ ຈຶ່ງພ້ອມກັນຈົດຈຳວັນທີ 22 ມີນາ, ຈົດຈຳບຸນຄຸນຂອງພັກ, ຍຶດໝັ້ນເດີນຕາມພັກ ແລະ ຕັ້ງໜ້າປະຕິບັດແນວທາງນະໂຍບາຍທີ່ພັກວາງອອກ ດ້ວຍຄວາມຮັບຜິດຊອບ.

ຂ້າພະເຈົ້າ ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າ ພາຍໃຕ້ການນຳພາຂອງພັກ, ຂະແໜງການຕ່າງປະເທດພວກເຮົາ ຈະນັບມື້ເຕີບໃຫຍ່ຂະຫຍາຍຕົວ, ຍາດໄດ້ຜົນສຳເລັດຕົວຈິງ ທີ່ໃຫຍ່ຫຼວງກວ່າເກົ່າ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ ກໍຄື ປະກອບສ່ວນເຂົ້າໃນການເສີມສ້າງສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາຂອງພາກພື້ນ ແລະ ຂອງໂລກ.

ຂໍຖືໂອກາດອັນມີຄວາມໝາຍສຳຄັນນີ້, ອວຍພອນໄຊອັນປະເສີດແດ່ ການນຳພັກ-ລັດ ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບມີຜົນສຳເລັດໃໝ່ ໃຫຍ່ຫຼວງກວ່າເກົ່າ ໃນການນຳພາປະເທດຊາດ ກ້າວຂຶ້ນຕາມຈຸດໝາຍທີ່ວາງໄວ້.

ພັກປະຊາຊົນ ປະຕິວັດລາວ ຈົ່ງໝັ້ນຍືນ !

**2) ຮັກສາການຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ບັນດາເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ, ສປ ຈີນ, ສປປ ເກົາຫຼີ ແລະ ສ. ກູບາ ປະຈຳ ສປປ ລາວ.**






ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ໃຫ້ການຕ້ອນຮັບການເຂົ້າອວຍພອນຂອງ ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ, ສປ ຈີນ, ສປປ ເກົາຫຼີ ແລະ ສ. ກູບາ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານສະຖານທູດ ເຂົ້າອວຍພອນ ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ເນື່ອງໃນໂອກາດວັນສ້າງຕັ້ງພັກປະຊາຊົນ ປະຕິວັດລາວ ຄົບຮອບ 70 ປີ (22/3/1955-22/3/2025).

ໃນໂອກາດນີ້, ສະຫາຍ ບຸນເຫຼືອ ພັນດານຸວົງ ໄດ້ສະແດງຄວາມປິຕິຊົມຊື່ນ ທີ່ໄດ້ຕ້ອນຮັບບັດດາ ເອກອັກຄະລັດຖະທູດ ພ້ອມດ້ວຍຄະນະ ທີ່ໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມ, ຄວາມສາມັກຄີອັນສະໜິດສະໜົມ, ຄຳອວຍພອນໄຊອັນປະເສີດ ຖານສະຫາຍອ້າຍນ້ອງ ມາສູ່ ຄະນະພັກ-ຄະນະນຳ ກໍຄື ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ, ເຊິ່ງເປັນການສະແດງໃຫ້ເຫັນເຖິງຄວາມມີຊີວິດຊີວາຂອງ ສາຍພົວພັນມິດຕະພາບ ແລະ ການຮ່ວມມືຮອບດ້ານ ຕະຫຼອດໄລຍະ 70 ປີ ແຫ່ງການກຳເນີດ ແລະ ເຕີບໃຫຍ່ເຂັ້ມແຂງ, ພັກປະຊາຊົນ ປະຕິວັດ

ລາວ ໄດ້ແບກຫາບພາລະກຳປະຫວັດສາດ ໃນການນຳພາການປະຕິວັດລາວ ເຮັດສຳເລັດ ພາລະກິດປົດປ່ອຍປະເທດຊາດ, ສືບຕໍ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພື່ອກ້າວສູ່ຈຸດໝາຍສັງຄົມນິຍົມ, ເຖິງວ່າ ຈະໄດ້ຮັບຜົນກະທົບຈາກ ສະພາບພາກພື້ນ ແລະ ສາກົນ, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ແຕ່ ພັກ, ລັດຖະບານລາວ ກໍ່ໄດ້ມີຄວາມພະຍາຍາມສູງໃນການແກ້ໄຂບັນຫາ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ນັບມື້ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ. ພ້ອມນັ້ນ, ໄດ້ສະແດງຄວາມຂອບໃຈໄປຍັງ ພັກ, ລັດ ແລະ ປະຊາຊົນຫວຽດນາມ, ສປ ຈີນ, ສປປ ເກົາຫຼີ ແລະ ສ. ກູບາ ທີ່ຍາມໃດກໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອອັນໃຫຍ່ຫຼວງ, ລ້ຳຄ່າ, ທັນການ ແລະ ມີປະສິດທິຜົນແກ່ ພັກ, ລັດ ແລະ ປະຊາຊົນລາວ ບັນດາເຜົ່າ ໃນການດຳເນີນພາລະກິດຕໍ່ສູ້ປົດປ່ອຍປະເທດຊາດ ໃນເມື່ອກ່ອນ ກໍຄື ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ.

ບັດດາເອກອັກຄະລັດຖະທູດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບ, ດີໃຈເປັນຢ່າງຍິ່ງ ທີ່ໄດ້ມາຊົມເຊີຍ ແລະ ອວຍພອນ ຄະນະພັກ-ຄະນະນຳ ແລະ ພະນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 70 ປີ ແລະ ໄດ້ສະແດງຄວາມປິຕິຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດທີ່ ພັກ, ລັດ ແລະ ປະຊາຊົນ ບັນດາເຜົ່າ ຍາດມາໄດ້ຕະຫຼອດໄລຍະຜ່ານມາ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສຂອງ ພັກປະຊາຊົນ ປະຕິວັດລາວ, ປະຊາຊົນລາວ ໄດ້ຜ່ານຜ່າຄວາມຫຍຸ້ງຍາກ, ສິ່ງທ້າທາຍນາໆປະການ, ຍາດໄດ້ໄຊຊະນະອັນໃຫຍ່ຫຼວງ ແລະ ມີຄວາມໝາຍປະຫວັດສາດໃນພາລະກິດການຕໍ່ສູ້ປົດປ່ອຍຊາດ ກໍຄືພາລະກິດແຫ່ງ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ, ເຊື່ອໝັ້ນວ່າ ດ້ວຍມູນເຊື້ອອັນພິລະອາດຫານ ແລະ ປີຊາສາມາດຂອງ ພັກ ປປ ລາວ ຈະສາມາດນຳພາ ປະຊາຊົນລາວ ສືບຕໍ່ຍາດໄດ້ບັນດາຜົນສຳເລັດ ໃໝ່ໃຫຍ່ຫຼວງກວ່າເກົ່າ ໃນການສືບຕໍ່ປະຕິບັດມະຕິກອງປະຊຸມໃຫຍ່ ສະໄໝທີ XI ຂອງພັກປະຊາຊົນ ປະຕິວັດລາວ ໃນໄລຍະທ້າຍສະໄໝ ໃຫ້ປະສົບຜົນສຳເລັດຢ່າງມີໄຊ.

**3) ຄຕພ ປະດັບຫຼຽນກາລະນຶກວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 70 ປີ ແລະ ປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ.**



ວັນທີ 21 ມີນາ 2025 ນີ້ ທີ່ຫ້ອງປະຊຸມໃຫຍ່ ຄຕພ ໄດ້ຈັດພິທີ ປະດັບຫຼຽນກາລະນຶກວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 70 ປີ ແລະ ປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ ໃຫ້ພະນັກງານ-ລັດຖະກອນ ທີ່ປະຈຳການ ແລະ ອາວຸໂສບຳນານ ເຊິ່ງເປັນປະທານ ໂດຍ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ມີຄະນະບໍລິຫານງານພັກ, ຄະນະກົມ, ພະນັກງານອາວຸໂສບຳນານ ແລະ ພະນັກງານ-ສະມາຊິກພັກ ເຂົ້າຮ່ວມ ຈຳນວນ 82 ສະຫາຍ.

ໃນພິທີດັ່ງກ່າວ ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ຂຶ້ນຜ່ານມະຕິຕົກລົງວ່າດ້ວຍການປະດັບຫຼຽນກາລະນຶກສະບັບເລກທີ 449/ຄລສພ, ລົງວັນທີ 14 ມີນາ 2025 ວ່າດ້ວຍການປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງພັກ ປປ ລາວ ໃຫ້ສະມາຊິກພັກ ຄະນະພົວພັນຕ່າງປະເທດສູນກາງພັກ ທີ່ມີຜົນງານ, ຄຸນງາມຄວາມດີ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕະຫຼອດໄລຍະຜ່ານມາ ຈຳນວນ 14 ສະຫາຍ ຍິງ 03 ສະຫາຍ; ຜ່ານຂໍ້ຕົກລົງສະບັບເລກທີ 95/ຄຈສພ, ລົງວັນທີ 13 ມີນາ 2025 ວ່າດ້ວຍການມອບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ ໃຫ້ພະນັກງານ-ລັດຖະກອນ ຂະແໜງຈັດຕັ້ງ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ຈຳນວນ 29 ສະຫາຍຍິງ 10 ສະຫາຍ. ໃນພິທີໄດ້ເຕັມໄປດ້ວຍບັນຍາກາດທີ່ເຊັ່ງຂຶມ ແລະ ມີຄວາມໝາຍສຳຄັນ ຕໍ່ສະມາຊິກພັກ-ພະນັກງານ ທີ່ໄດ້ປະກອບສ່ວນຕໍ່ພັກ ຕະຫຼອດໄລຍະ 70 ປີຜ່ານມາ.

ໃນວາລະທຳອິດ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ກຽດປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງພັກ ປປ ລາວ ໃຫ້ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ.

ວາລະຕໍ່ມາ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະພັກ, ຮັກສາການຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ໃຫ້ກຽດປະດັບຫຼຽນກາລະນຶກ 70 ປີ ວັນສ້າງຕັ້ງ ພັກ ປປ ລາວ ໃຫ້ແກ່ພະນັກງານນຳພາຄຸ້ມຄອງ ແລະ ພະນັກງານອາສຸໂສບຳນານ ແລະ ປະດັບຫຼຽນລະນຶກ 70 ປີ ວັນສ້າງຕັ້ງຄະນະຈັດຕັ້ງສູນກາງພັກ ໃຫ້ພະນັກງານທີ່ເຮັດວຽກງານຈັດຕັ້ງ ຂອງຄະນະພົວພັນຕ່າງປະເທດຕາມລຳດັບ.

4) **ຄະນະພົວພັນຕ່າງປະເທດສູນກາງພັກ, ຈັດພິທີມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ເຜີຍແຜ່ເນື້ອໃນຈິດໃຈກອງປະຊຸມວຽກງານກວດກາທົ່ວປະເທດ ປີ 2024; ສະຫຼຸບ ແລະ ເປີດຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ປີ 2025.**



ວັນທີ 07 ມີນາ 2025, ຄະນະພົວພັນຕ່າງປະເທດສູນກາງພັກ (ຄຕພ) ໄດ້ຈັດພິທີມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ເຜີຍແຜ່ເນື້ອໃນຈິດໃຈກອງປະຊຸມວຽກງານກວດກາທົ່ວປະເທດ ປີ 2024; ສະຫຼຸບ ແລະ ເປີດຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ປີ 2025 ພາຍໃຕ້ການເປັນປະທານຂອງ ສະຫາຍ ບຸນເຫຼືອ ພັນດານຸວົງ, ຮັກສາການເລຂາຄະນະພັກ, ຮັກສາການຫົວໜ້າ ຄະນະພົວພັນຕ່າງປະເທດສູນກາງພັກ ຊຶ່ງມີບັນດາຄະນະບໍລິຫານງານພັກ, ຫ້ອງການ, ບັນດາກົມ, ພະແນກ, ສະມາຊິກພັກ, ພະນັກງານ ເຂົ້າຮ່ວມ 92 ສະຫາຍ, ຍິງ 36 ສະຫາຍ.

ສະຫາຍ ຣັກສາການ ເລຂາຄະນະພັກ ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາສູງມາຍັງບັນດາໜ່ວຍພັກພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ທີ່ສາມາດສ້າງ ແລະ ຮັກສານາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2024 ໄດ້ເຖິງ 06 ໜ່ວຍພັກ ເຊິ່ງເປັນຄັ້ງທີ 2 ທີ່ສາມາດຍາດມາໄດ້ພ້ອມກັນທັງ 06 ໜ່ວຍພັກ ສາມາດຕີລາໄດ້ 100 %, ສິ່ງດັ່ງກ່າວສະແດງໃຫ້ເຫັນເຖິງການຊີ້ນຳໆພາ, ຄວາມເປັນເອກະພາບພາຍໃນໜ່ວຍພັກ, ຄວາມບຸກບືນຫ້າວຫັນໃນການເຄື່ອນໄຫວເຮັດໜ້າທີ່ການເມືອງ ຂອງສະມາຊິກພັກ-ພະນັກງານຢ່າງຕັ້ງໜ້າ ໂດຍຕິດພັນກັບຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ຂອງບັນດາກົມ ສຳເລັດຜົນດ້ວຍດີ ເຊິ່ງສະແດງອອກໃນການປະເມີນວຽກງານ ແລະ ການຍ້ອງຍໍ ປະຈຳປີ 2024 ຂອງພະນັກງານ-ລັດຖະກອນ ທີ່ຜ່ານມານີ້.

ໂອກາດນີ້ ສະຫາຍ ກໍ່ໄດ້ໃຫ້ທິດຊີ້ນຳບັນດາໜ່ວຍພັກ ພາຍໃນ ຄະນະພົວພັນຕ່າງປະເທດສູນກາງພັກ ຈົ່ງພາກັນສືບຕໍ່ຮັກສານາມມະຍົດໃຫ້ໄດ້ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນຊຸມປີຕໍ່ໜ້າ ແລະ ຕິດພັນກັບຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ໃຫ້ເປັນຂະບວນການຟົດຟື້ນ, ຍົກສູງຄວາມເປັນແບບຢ່າງນຳໜ້າ, ເອົາໃຈໃສ່ວຽກງານນຳພາການເມືອງ-ແນວຄິດ ຂອງສະມາຊິກພັກ-ພະນັກງານ ເປັນກົກ, ເອົາໃຈໃສ່ໃນການປະຕິບັດຫຼັກການລວມສູນປະຊາທິປະໄຕ, ພ້ອມກັນປັບປຸງລະບອບແບບແຜນວິທີເຮັດວຽກກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ, ສຶກສາອົບຮົມໃຫ້ພະນັກງານ-ສະມາຊິກພັກ ເອົາໃຈໃສ່ການປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ ວາງອອກ, ຮັບປະກັນໃນການເປັນເສນາທິການໃຫ້ຂັ້ນເທິງໃນແຕ່ລະໄລຍະ, ໃນໂອກາດດຽວກັນ, ບັນດາໜ່ວຍພັກ ພາຍໃນ ຄຕພ ກໍ່ໄດ້ຂຶ້ນຈັບມືເປີດຂະບວນການແຂ່ງຂັນ-ຍ້ອງຍໍ ຮັກຊາດ ແລະ ພັດທະນາ ປີ 2025, ໂດຍບັນດາໜ່ວຍພັກໄດ້ໃຫ້ຄຳໝັ້ນສັນຍາວ່າ ຈະພ້ອມກັນສູ້ຊົນສືບຕໍ່ກໍ່ສ້າງໜ່ວຍພັກຂອງຕົນ ແລະ ຫຼາຍກວ່າເກົ່າ ທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສືບຕໍ່ເປັນເຈົ້າການໃນການຮັກສານາມມະຍົດໜ່ວຍພັກຂອງຕົນໃຫ້ໄດ້ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນປີ 2025 ແລະ ໃນປີຕໍ່ໄປ.